# ການປູກ ຫວາຍໜາມທ່າງ

**ການປູກຫວາຍເພື່ອເກັບກູ້ເສັ້ນ:**

ເນື່ອງຈາກວ່າຫວາຍໜາມທ່າງເປັນຫວາຍທີ່ເກີດເປັນສຸມເໝາະສົມຕໍ່ການປູກເພື່ອຕັດເສັ້ນ, ຫວາຍຊະນິດນີ້ເປັນຫວາຍທີ່ໃຫຍ່ໄວ, ເສັ້ນຫວາຍຈັດຢູ່ໃນຫວາຍເສັ້ນນ້ອຍໜ້າຕ້າງແຕ່ 0.5 — 1.5 ຊມ. ແລະ ເປັນຫວາຍທີ່ໂຮງງານປຸງແຕ່ງ ຫວາຍນິຍົມນຳມາໃຊ້ໃນການຈັກສານ ແລະ ຈັດຢູ່ໃນຫວາຍເສັ້ນນ້ອຍອັນດັບ3 ຮອງຈາກຫວາຍຫອມ ແລະ ຫວາຍຫອກ.

ສະນັ້ນການປູກຫວາຍຊະນິດນີ້ງ່າຍຄືກັນກັບການປູກຫວາຍຫອກ, ຈະຕ່າງແຕ່ໄລຍະຫ່າງຂອງການປູກນັ້ນຈະຫ່າງຫຼາຍກວ່າຫວາຍຫອກ, ຍ້ອນວ່າຫວາຍຊະນິດນີ້ເກີດເປັນສຸມ ແລະ ຈະຕ້ອງໄດ້ອາໃສຕົ້ນໄມ້ ເພື່ອເປັນບ່ອນປີນປ່າຍຂອງລຳຫວາຍ, ຫວາຍໜາມທ່າງຈະມັກພົບເຫັນຢູ່ໃນປ່າປະສົມ, ປ່າໂຄກທີ່ມັກມີຫວາຍຫອກເກີດຢູ່ນຳກັນ.

ແຕ່ຜ່ານການນຳມາປູກເພື່ອລວມພັນຢູ່ສູນຄົ້ນຄ້ວາປ່າໄມ້ໃນປີ 1999 ເຫັນວ່າມີການຈະເລີນເຕີບໂຕທາງດ້ານຄວາມ ຍາວດີ ຊຶ່ງຍັງບໍ່ທັນມີໃຜນຳເອົາຫວາຍຊະນິດນີ້ມາຢູ່ກ່ອນໜ້ານີ້ໃນ ສປປ ລາວ.

## 1. ປັດໃຈທີ່ຄວນເລືອກ

- ເນື້ອທີ່ສວນປູກຈະຕ້ອງເປັນປ່າເລົ່າແກ່ ຫຼື ປ່າປະສົມທີ່ມີແສງສະຫວ່າງຜ່ານລົງປະມານ 50 — 70 %
- ລັກສະນະຂອງດິນຊາຍແກມຫີນແຮ່
- ມີຕົ້ນໄມ້ສຳລັບປີນປ່າຍ.



ສຸມຫວາຍໜາມທ່າງ

## 2. ເຕັກນິກການປູກ

**<u>ແນວພັນ ແລະ ລະດູການ:</u>**

- ກະກຽມແນວພັນໃຫ້ໄດ້ 9 — 12 ເດືອນ
- ລະດູການທີ່ເໝາະສົມ ເດືອນ 5 (ພຶດສະພາ)

**<u>ໄລຍະຫ່າງການປູກ:</u>**

- ໄລຍະຫ່າງຂອງຖັນ ແລະ ແຖວ 2X2 ແມັດ.

**<u>ການຂຸດຂຸມ ແລະ ປູກ:</u>**

- ຂຸມປູກຂະໜາດ30X30X30ຊມ (ກວ້າງ,ຍາວ,ເລິກ)

**<u>ການບົວລະບັດຮັກສາ:</u>**

- ຫົດນ້ຳຫຼັງຈາກປູກແລ້ວ 1 — 2 ຄັ້ງ / ອາທິດ (ຖ້າຝົນບໍ່ຕົກ)
- ພາຍຫຼັງປູກຫວາຍແລ້ວ 3 ເດືອນ ໃຫ້ເອົາຝຸ່ນຄອກໃສ່ໃນອັດຕາສ່ວນ 1 ກກ / ຕົ້ນ ຫຼື ຝຸ່ນເຄມີໃສ່ອີກ 1 ຄັ້ງ ຫຼື 200 ກຼ / ຕົ້ນ (ສູດ15-15-15 ຫຼື18-64-00) ພ້ອມທັງອະນາໄມຫຍ້າບ່ອນທີ່ຢູ່ໃກ້ກັບຕົ້ນຫວາຍນັ້ນອອກ. ຫວາຍໜາມທ່າງເມື່ອປູກໄດ້ 6 ປີກໍ່ສາມາດຕັດເສັ້ນຫວາຍມານຳໃຊ້ໄດ້.

## 3. ການເກັບກູ້ເສັ້ນຫວາຍ

ເສັ້ນຂອງຫວາຍໜາມທ່າງຈະແຂງ ແລະ ໝັ້ນໝຽວ ໃນເມື່ອອາຍຸໄດ້ 10 ປີ ຂຶ້ນໄປ, ການວັດແທກທົດລອງ ເຫັນວ່າມີຄວາມຍາວສະເລ່ຍ 11 — 12 ມ ຫຼື ອາດຈະ ຫຼາຍກວ່ານີ້ຖ້າພື້ນທີ່ເໝາະສົມກວ່າ ແລະ ມີການດູແລດີ

(ຄຳພອນແສງດາລາ ແລະ ສູນທອນ ເກດພັນ 2006).



ເສັ້ນຫວາຍໜາມທ່າງ

ຖ້າປູກຫວາຍໜາມທ່າງ:

1 ຮຕ= 2,500 ຕົ້ນ

1 ເສັ້ນ,= 1.5 ກກ (ກິໂລກຣາມ)

ຖ້າຫາກຂາຍ:

ກິໂລກຣາມລະ 4,000 ກີບ ສາມາດສ້າງລາຍຮັບໄດ້ 15 ລ້ານກີບ/ຮຕ .


WWF

ໂທ: 021 216080

ຂໍ້ມູນເຕັກນິກຕິດຕໍ່

ທ່ານ ຄຳພອນ ແສງດາລາ

ໂທ: 020 6861101

LEAP

ໂທ: 021 740253

ຫຼື 021 740252

SUFORD

ໂທ: 021 740544

ຫຼື 021 740543



**ພາຍໃຕ້ການຮ່ວມມື :**

ສະຖາບັນຄົ້ນຄວ້າ ເຕັກນິກ—ວິທະຍາສາດ ກະສິກຳ ແລະ ປ່າໄມ້,

ກອງສົ່ງເສີມກະສິກຳ ແລະ ປ່າໄມ້

**ສະໜັບສະໜຸນໂດຍ:**

ໂຄງການ ສົ່ງເສີມ ກະສິກຳ **(LEAP),**

ກອງທຶນອະນຸລັກທຳມະຊາດໂລກ **(WWF) & (SUFORD)**


ສູນຂໍ້ມູນຂ່າວສານການສົ່ງເສີມ

# ເຕັກນິກການປູກ

# ຫວາຍ ໜາມທ່າງ

***Calamus palustris Griffitb***

